ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 12 ຫາ 16 ສິງຫາ 2024




ກອງປະຊຸມປຶກສາຫາລື ກ່ຽວກັບການປັບປຸງກົນໄກການປະສານງານ ລະຫວ່າງ 2 ກະຊວງ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ກອງປະຊຸມປຶກສາຫາລື ກ່ຽວກັບການປັບປຸງກົນໄກ ການປະສານງານ ລະຫວ່າງ 2 ກະຊວງ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ກອງປະຊຸມປຶກສາຫາລື ກ່ຽວກັບການປັບປຸງກົນໄກການປະສານງານ ລະຫວ່າງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກັບ ກະຊວງກະສິກຳ ແລະ ປ່າໄມ້ ປະຈຳປີ 2024 ໄດ້ຈັດຂຶ້ນໃນຕອນເຊົ້າວັນທີ 24 ກໍລະກົດ 2024 ທີ່ຫ້ອງປະຊຸມກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍການເປັນປະທານຮ່ວມຂອງ ທ່ານ ປອ. ນາງ ບຸນຄຳ ວໍລະຈິດ ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້. ມີບັນດາຮອງລັດຖະມົນຕີ, ຫົວໜ້າ-ຮອງຫົວໜ້າກົມ, ຫ້ອງການ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງຂອງທັງ 2 ກະຊວງເຂົ້າຮ່ວມ.

ຈຸດປະສົງກອງປະຊຸມແມ່ນເພື່ອເປັນການຜັນຂະຫຍາຍ ໃນການຈັດຕັ້ງປະຕິບັດບັນດານິຕິກຳ, ກົນໄກການເຮັດວຽກ ແລະ ການແບ່ງຄວາມຮັບຜິດຊອບ ລະຫວ່າງ 2 ກະຊວງ ໃຫ້ມີຄວາມລະອຽດຈະແຈ້ງ ເພື່ອພ້ອມກັນຈັດຕັ້ງປະຕິບັດວຽກງານຕາມຄວາມຮັບຜິດຊອບຂອງແຕ່ລະຂະແໜງການ ໃຫ້ບັນລຸຜົນສຳເລັດຕາມຄາດໝາຍ ແລະ ແຜນການທີ່ວາງໄວ້ເປັນຕົ້ນແມ່ນ ວຽກງານການສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ບົດບັນທຶກຮ່ວມກັນ ຂອງ 2 ກະຊວງ, ວຽກງານການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້, ວຽກງານຄຸ້ມຄອງປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນ

ທຳມະຊາດ, ວຽກງານການຈັດຕັ້ງປະຕິບັດ ຄຳສັ່ງ ສະບັບເລກທີ 11/ນຍ ແລະ ວຽກງານການຈັດຕັ້ງປະຕິບັດສັນຍາ ທີ່ຕິດພັນກັບຂະແໜງການຂອງແຕ່ລະກະຊວງ. ໃນທີ່ປະຊຸມ ໄດ້ຮັບຟັງການນຳສະເໜີ ກ່ຽວກັບວຽກງານການຮັບຮູ້ສິດນຳໃຊ້ທີ່ດິນຂອງປະຊາຊົນທີ່ອາໄສຢູ່ໃນທີ່ດິນປ່າໄມ້ ໃຫ້ມີເນື້ອທີ່ດິນປຸກສ້າງ ແລະ ເນື້ອທີ່ດິນທຳການຜະລິດຢ່າງຖາວອນ, ການຈັດສັນທີ່ດິນປ່າໄມ້ ໃນເຂດທີ່ດິນປ່າໄມ້, ຄວາມຄືບໜ້າກ່ຽວກັບ "ຮ່າງ" ຂໍ້ຕົກລົງວ່າດ້ວຍເງື່ອນໄຂການອອກໃບຢັ້ງຢືນການນຳໃຊ້ທີ່ດິນ, ວຽກງານການກວດກາ ການເຊົ່າ ແລະ ສຳປະທານທີ່ດິນ, ການຈັດຕັ້ງປະຕິບັດ ຄຳສັ່ງ ວ່າດ້ວຍການເພີ່ມທະວີເຂັ້ມງວດໃນການຄຸ້ມຄອງ ປົກປັກຮັກສາພັດທະນາ ແລະ ນຳໃຊ້ປ່າໄມ້ ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ສະບັບເລກທີ 11/ນຍ,ລົງວັນທີ 21 ກໍລະກົດ 2024. ພ້ອມນີ້ ໃນທີ່ປະຊຸມ ໄດ້ພ້ອມກັນປຶກສາຫາລື ແລກປ່ຽນຄຳຄິດຄຳເຫັນ ທີ່ຕິດພັນກັບວຽກງານຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງວຽກງານອຸຕຸນິຍົມ-ອຸທົກກະສາດ ແລະ ວຽກງານການປ່ຽນແປງດິນຟ້າອາກາດ, ການຊື້-ຂາຍ ສິນເຊື່ອກາກບອນ, ການປະຕິບັດກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ເພື່ອເປັນແນວທາງ ແລະ ເປັນເອກະພາບກັນ ໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າໃຫ້ໄປໃນທິດທາງດຽວກັນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;